ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ


ບໍລິສັດລັດ ບໍລິຫານໜີ້ ແລະ ຊັບສິນ ຈຳກັດຜູ້ດຽວ

**Debt and Asset Management State Sole Co.,LTD**


ເລກທີ 22 /ບລໜຊ

ນະຄອນຫຼວງວຽງຈັນ, ວັນທີ 19 ມິຖຸນາ 2026

## ໜັງສືແຈ້ງເຊີນເຂົ້າຮ່ວມການປະມູນ

ເຖິງ: ບັນດາບໍລິສັດຮັບເໝົາກໍ່ສ້າງ

ເລື່ອງ: ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາການກໍ່ສ້າງສະຖານທີ່ຈອດລົດ ຂອງ ບໍລິສັດລັດ ບໍລິຫານໜີ້ ແລະ ຊັບສິນ ຈຳກັດຜູ້ດຽວ

ບໍລິສັດລັດ ບໍລິຫານໜີ້ ແລະ ຊັບສິນ ຈຳກັດຜູ້ດຽວ (ບລໜຊ) ຂໍຖືເປັນກຽດແຈ້ງເຊີນບັນດາບໍລິສັດຮັບເໝົາກໍ່ສ້າງ ທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນລາຄາການກໍ່ສ້າງສະຖານທີ່ຈອດລົດ ຂອງ ບລໜຊ, ສະຖານທີ່ຕັ້ງຢູ່ບ້ານຈອມມະນີ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ຜູ້ທີ່ສົນໃຈເຂົ້າຮ່ວມຍື່ນຊອງປະມູນໃຫ້ປະຕິບັດດັ່ງລຸ່ມນີ້:

**I. ມາດຖານ-ເງື່ອນໄຂການປະກອບເອກະສານການປະມູນ:**

1. ຕ້ອງມີໃບທະບຽນວິສະຫະກິດ, ໃບອະນຸຍາດດຳເນີນທຸລະກິດ ດ້ານການກໍ່ສ້າງ ປະຈຳປີ 2024 ຫຼື 2025, ໃບທະບຽນອາກອນ ປະຈຳປີ 2025 ແລະ ໃບຢັ້ງຢືນການເສຍພັນທະອາກອນປະຈຳປີ 2025;
2. ມີທຶນຈົດທະບຽນວິສະຫະກິດ 500 ລ້ານກີບ ຂຶ້ນໄປ;
3. ມີໃບຢັ້ງຢືນຜົນງານ ແລະ ປະສົບການທົ່ມງານດ້ານການກໍ່ສ້າງ;
4. ມີແຜນການໄລຍະເວລາການຮັບເໝົາກໍ່ສ້າງ ບໍ່ເກີນ 03 ເດືອນ.

**II. ການພິວພັນຊື້ຊອງປະມູນ, ການຍື່ນຊອງປະມູນ ແລະ ປິດຮັບຊອງປະມູນ:**

1. ບໍລິສັດທີ່ຕ້ອງການເຂົ້າຮ່ວມການປະມູນ ສາມາດເຂົ້າຊື້ຊອງປະມູນໄດ້ຢູ່ທີ່ ບລໜຊ, ສະຖານທີ່ຕັ້ງຢູ່ບ້ານ ຈອມມະນີ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ແຕ່ວັນທີ 22-29 ມິຖຸນາ 2026 ໃນໂມງລັດຖະການ (08:00-16:00 ໂມງ) ໃນລາຄາ 600.000 ກີບ/ຊອງ;
2. ບໍລິສັດທີ່ຕ້ອງການເຂົ້າຮ່ວມການປະມູນ ສາມາດເຂົ້າມາສອບຖາມລາຍລະອຽດການກໍ່ສ້າງສະຖານທີ່ຈອດລົດ ກ່ອນການຊື້ຊອງປະຊຸມໄດ້ທີ່ ບລໜຊ, ສະຖານທີ່ຕັ້ງຢູ່ບ້ານຈອມມະນີ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ;
3. ມື້ເປີດຊອງປະມູນແມ່ນວັນທີ 30 ມິຖຸນາ 2026, ເວລາ 10:00 ໂມງ, ໃນມື້ເປີດຊອງປະມູນລາຄາ ບໍລິສັດຕ້ອງມາຍື່ນດ້ວຍຕົນເອງ, ກໍລະນີບໍ່ສາມາດມາດ້ວຍຕົນເອງ ຕ້ອງມອບສິດໃຫ້ຜູ້ຕາງໜ້າມາແທນໄດ້ ໂດຍມີໃບມອບສິດຈາກຜູ້ອຳນວຍການ ຫຼື ຜູ້ທີ່ມີສິດອຳນາດຈາກບໍລິສັດ (ຈະບໍ່ຮັບການຍື່ນເອກະສານແບບອອນລາຍ).

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາບໍລິສັດ ເພື່ອເຂົ້າຮ່ວມຍື່ນຊອງປະມູນຕາມທີ່ກ່າວມາຂ້າງເທິງດ້ວຍ.

ຜູ້ອຳນວຍການ

ທິບພະວັນ ຈັນທະຜາສຸກ

ຕິດຕໍ່ພົວພັນ:

ທ່ານ ວຽງໄຊ ລໍລະຄຳ 020 5911 1147




ສະແກນດ້ວຍ CamScanner